

# ບົດທີ 2

## ກຳແໜ້ນວິທີອະທິບາຍ, ຕອບໂຕ້ ຖ້ອຍທຳນອງ ບິດເບືອນໃນສື່ອອນລາຍ

**<u>ສະເໜີໂດຍ</u>: <u>ທ່ານ ຄຳວິສັນ ແກ້ວສຸວັນ</u>**

- ຊ່ຽວຊານ ທີ່ປຶກສາສື່ມວນຊົນສະພາແຫ່ງຊາດ
- ຊ່ຽວຊານ ບັນນາທິການ ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ
- ຢູ່ໃນວົງການສື່ມວນຊົນ 40 ປີ, ໃນນັ້ນ 30 ປີ ເປັນບັນນາທິການ






ນັກຂ່າວລາວຜູ້ທຳອິດທີ່ໄດ້ຮັບກຽດປະດັບຫຼຽນກາໜັງສືພິມຈາກໜັງສືພິມ " ເຍີນ ເຢີນ " ສຽງຂອງສູນກາງພັກກອມມູນິດຫວຽດນາມ; ປີ 1998...

# I. ຈຸດປະສົງ

ເພື່ອໃຫ້ນັກຂ່າວກໍາໄດ້ ວິທີຕອບໂຕ້ຖ້ອຍທໍານອງບິດເບືອນຂອງກຸ່ມບໍ່ຄືນດີທັງພາຍໃນ ແລະ ຕ່າງປະເທດ ຕໍ່ແນວທາງນະໂຍບາຍຂອງພັກ-ລັດ ກໍ່ຄືຮີດຄອງປະເພນີອັນດີງາມຂອງຊາດລາວເຮົາ.

❖ **<u>ລະດັບຄາດໝາຍ:</u>**

ຊ່ວຍໃຫ້ນັກຂ່າວ ສາມາດຂຽນຂ່າວຕອບໂຕ້ ໄດ້ຢ່າງມີປະສິດທິຜົນ ສາມາດອະທິບາຍ ບັນດາບັນຫາ ທີ່ເກີດຂຶ້ນໃຫ້ທັນການຖືກຕ້ອງຕາມແນວທາງຂອງພັກ-ລັດ ກໍ່ຄືກົດໝາຍ, ລະບຽບການຕ່າງໆ; ເຮັດໃຫ້ເກີດປະໂຫຍດສູງສຸດໃນວຽກງານແນວຄິດ-ການເມືອງ ທີ່ວສັງຄົມໃຫ້ເດີນໄປຕາມທິດທາງດຽວກັນ.

# II. ເນື້ອໃນ

## 1. ຄຳນິຍາມ :

ສື່ສັງຄົມອອນລາຍໝາຍເຖິງ ສື່ແບບໃໝ່ປະເພດໜຶ່ງທີ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຊ້ສື່ສານກັນຜ່ານລະບົບເຄືອຂ່າຍອິນເຕີເນັດ ເພື່ອເຜີຍແຜ່ຂໍ້ມູນຂ່າວສານສູ່ສາທາລະນະ ດ້ວຍການນຳໃຊ້ອຸປະກອນຄອມພິວເຕີ ແລະ ອຸປະກອນສື່ສານອື່ນໆ ( ອີງຕາມກົດໝາຍວ່າດ້ວຍສື່ມ່ວນຊົນ ສະບັບປັບປຸງ ເລກທີ 019/ສປຊ ລົງວັນທີ 04/11/2016 ).

# 2. ການພັດທະນາ ແລະ ວິວັດທະນາການ ຂອງສື່ສັງຄົມອອນລາຍ.

- ໃນຍຸກເລີ່ມຕົ້ນອິນເຕີເນັດຖືກຄົ້ນພົບ ແລະ ນຳໃຊ້ເຂົ້າໃນວຽກງານປ້ອງກັນຊາດ ຂອງສະຫະລັດອາເມລິກາ ໃນທ້າຍຊຸມປີ 60 ປີ ຊຶ່ງຮັບການພັດທະນາຂຶ້ນເລື່ອຍໆ;
- ໃນຊຸມປີ 80 ຈຶ່ງປາກົດມີການສ້າງເວັບໄຊ ຢ່າງແຜ່ຫຼາຍ;
- ປີ 1995 ປະກົດມີການສ້າງເວັບໄຊ ຂາຍເຄື່ອງອອນລາຍ ເຊັ່ນ: eBay, Amazon;
- ປີ 1998 ຈຶ່ງປາກົດມີເວັບໄຊ໌: ກູໂກ້ Google;
- ໃນຍຸກນີ້ ກໍຖືເປັນການກຳເນີດບາງເວັບໄຊ໌ ສື່ສັງອອນລາຍ ເຊັ່ນ: MySpace, Facebook..

# ການພັດທະນາ ແລະ ວິວັດທະນາການຂອງສື່ສັງຄົມອອນລາຍ ( ຕໍ່ )

ຈົນມາຮອດປີ 2004 ຍຸກແຫ່ງເວັບໄຊ໌ ຂອງສື່ສັງຄົມອອນລາຍ Facebook ກໍໄດ້ພັດທະນາມາເລື່ອຍໆ ເຊັ່ນ: YouTube, twitter, Instagram ແລະ ອື່ນໆ. ນັບແຕ່ປີ 2011 ເປັນຕົ້ນມາ ຈຶ່ງໄດ້ກາຍເປັນຍຸກແຫ່ງສືສັງຄົມອອນລາຍ ຫຼື ສື່ໃນໄລຍະໃໝ່ ທີ່ກາຍເປັນລູກຫຼິ້ນ (Application) ເທິງມືຖືຢ່າງແຜ່ຫຼາຍ ແລະ ຖືກນໍາໃຊ້ຫຼາຍທີ່ສຸດໃນໂລກ;



# ໃນຕົ້ນປີ 2024 ສະຖິຕິຂອງການນຳໃຊ້ສື່ສັງຄົມອອນລາຍມີດັ່ງນີ້:

( ຫົວໜ່ວຍ: ບັນຊີ )

- 1. Facebook — 3,049 ຕື້
- 2. YouTube — 2,491 ຕື້
- 3. Whatsapp — 2,000 ຕື້
- 4. Instagram — 2,000 ຕື້
- 5.tiktok — 1,562 ຕື້
- 6.Wechat ( ສ່ວນໃຫຍ່ຢູ່ຈີນ ) — 1,336 ຕື້
- 4. Facebook Massenger — 979 ຕື້
- 5. X (Twitter) — 619 ຕື້

ຂໍ້ມູນອ້າງອີງຈາກ ເວັບໄຊ໌ Datareportal (https://datareportal.com/reports/digital-2024-global-overview-report)

# 1. ດ້ານຕັ້ງໜ້າ ແລະ ດ້ານຫຍໍ້ທໍ້ ຂອງການນຳໃຊ້ສື່ສັງຄົມອອນລາຍ

1. **ດ້ານຕັ້ງໜ້າ.**
   - ດ້ານການຕິດຕໍ່ສື່ສານ, ການສົ່ງຈົດໝາຍເອເລັກໂຕຣນິກ ....
   - ເປັນລະບົບການສື່ສານ (Cyberspace) ທີ່ບໍ່ຈຳກັດພື້ນທີ່ການສົນທະນາເປັນຕົ້ນ: ດ້ານເຊື້ອຊາດ, ສາສະໜາ, ຊາຍແດນ, ລະບອບການປົກຄອງ , ກົດໝາຍ ແລະ ອື່ນໆ.
   - ລະບົບການຮຽນ-ການສອນຜ່ານເຄືອຂ່າຍອິນເຕີເນັດ.
   - ການຄົ້ນຫາຂໍ້ມູນຕ່າງໆ ໂດຍຜ່ານລະບົບການບໍລິການ (World Wide Web).
   - ການພັດທະນາເສດຖະກິດ-ສັງຄົມ ແລະ ການບໍລິການດ້ານທຸລະກິດຕ່າງໆ.
   - ໃນຍຸກນີ້ ສາມາດເຫັນໄດ້ວ່າ ການພັດທະນາດິຈິຕອນ ໄດ້ຂະຫຍາຍຕົວຢ່າງວ່ອງໄວ ແລະ ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເປັນບັນຫາສຳຄັນໃນການພັດທະນາເສດຖະກິດ-ສັງຄົມ.

## 1.2 ດ້ານຫຍໍ້ທໍ້.

- ອິນເຕີເນັດ ( Internet ) ຫຼື ສື່ສັງຄົມອອນລາຍ ອາດເປັນແຫຼ່ງຂໍ້ມູນບໍ່ຖືກຕ້ອງຕາມຄວາມຈິງ, ບາງອັນກໍມີລັກສະນະຫຼໍ່ແຫຼມຜິດເຂວ ແລະ ອື່ນໆ;
- ສື່ອອນລາຍ ເປັນລະບົບເສລີ, ບໍ່ມີເຈົ້າຂອງ ແລະ ບໍ່ສາມາດຄວບຄຸມໄດ້;
- ຂໍ້ມູນບາງຢ່າງບໍ່ເປັນຄວາມຈິງ ສະນັ້ນ ຕ້ອງໄດ້ວິເຄາະ, ວິໄຈຂໍ້ມູນຢ່າງຖີ່ຖ້ວນ;
- ຖ້າຫຼິ້ນຫຼາຍເກີນໄປ ກໍພາໃຫ້ເສຍເວລາ, ເສຍວຽກງານ, ຂາດການພົວພັນທາງສັງຄົມ;
- ມີການນໍາເອົາຂໍ້ມູນຂ່າວສານ ທີ່ມີລັກສະນະຕົວະຍົວະຫຼອກລວງ ໄປໃນທາງບໍ່ຖືກຕ້ອງ ຕ້ານພັກ, ຕ້ານລັດຖະບານ.

- ຍຸຍົງສົ່ງເສີມການເຄື່ອນໄຫວທີ່ເປັນໄພຕໍ່ສັງຄົມ ແລະ ປະເທດຊາດ;
- ການໂຄສະນາບິດເບືອນໃສ່ຮ້າຍປ້າຍສີບຸກຄົນ ແລະ ການຈັດຕັ້ງ;
- ສ້າງຄວາມແບ່ງແຍກລະຫວ່າງປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ;
- ເຜີຍແຜ່ຮູບລາມົກອານາຈານທີ່ແຕະຕ້ອງເຖິງຮີດຄອງປະເພນີ;
- ເຜີຍແຜ່ຂໍ້ມູນບໍ່ຖືກຕ້ອງ ແລະ ບິນເບືອນຄວາມຈິງ;
- ສ້າງຄວາມເສື່ອມເສຍຕໍ່ກຽດສັກສີ;
- ບຸກຄົນ ຫຼື ການຈັດຕັ້ງໄດ້ສວຍໃຊ້ສື່ອອນລາຍ ເພື່ອສະແຫວງຫາຜົນປະໂຫຍດແກ່ຕົນເອງ ແລະ ພັກພວກໂດຍບໍ່ຄຳນຶງ ເຖິງສິນທຳ ແລະ ຄວາມຖືກຕ້ອງ.

## 2. ສະພາບຄວາມເປັນຈິງຢູ່ລາວ.

- ສປປ ລາວ 2 ອັນດັບ ແອັບພິເຄຊັນ ທີ່ໃຊ້ຫຼາຍກວ່າໝູ່ແມ່ນ:

  Facebook ແລະ WhatsApp.

- ໃນຕົ້ນປີ 2024 ໄດ້ມີການລົງທະບຽນ:



❑ ນຳໃຊ້ໂທລະສັບມືຖືຫຼາຍກວ່າ 6,113,752 ເລກໝາຍ;

❑ ມີຜູ້ໃຊ້ອິນເຕີເນັດລະບົບມີສາຍ ແລະ ມືຖື 4,614,752 ບັນຊີ;

❑ ການນຳໃຊ້ສື່ສັງຄົມອອນລາຍ  8 ລ້ານຄົນ.

*( ອ້າງອີງຈາກບົດສຳພາດຂອງລັດຖະມົນຕີ ກະຊວງ ໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ )*

## 3. ການຄຸ້ມຄອງ.

- ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ, **ທ່ານ ຮອງ ນາຍົກ ພົນເອກ ວິໄລ ຫຼ້າຄຳຟອງ ເປັນປະທານ**, ມີບັນດາກະຊວງທີ່ກ່ຽວຂ້ອງເປັນຄະນະ ແລະ ສູນອິນເຕີເນັດ ແຫ່ງຊາດເປັນກອງເລຂາ;
- ສູນອິນເຕີເນັດເປັນຜູ້ລວມສູນການສື່ສານ;
- ສູນສະກັດກັ້ນ ແລະ ແກ້ໄຂສຸກເສີນຄອມພິວເຕີ ( Lao CERT ) ໄດ້ເຜີຍແຜ່ ແລະ ສ້າງຈິດສຳນຶກໃນການນຳໃຊ້ອິນເຕີເນັດໃຫ້ມີຈັນຍາບັນ ແລະ ປອດໄພ.
- ມີບັນດານິຕິກຳ ຫຼາຍກວ່າ 70 ສະບັບ ກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ແລະ ສື່ໃນໄລຍະໃໝ່ກໍມີ.

# ການຄຸ້ມຄອງ ( ຕໍ່ )

- ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕນິກ;
- ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງດ້ານລະບົບຄອມພິວເຕີ;
- ດຳລັດວ່າດ້ວຍການຄຸ້ມຄອງຂໍ້ມູນຂ່າວສານຜ່ານທາງອິນເຕີເນັດ (ດຳລັດ 327/ລບ);
- ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
- ດຳລັດວ່າດ້ວຍສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ.

# ການຂຽນຂ່າວອອນລາຍ

1. **ຄວາມສຳນຶກ:**

ຂ່າວອອນລາຍ ສ່ວນຫຼາຍໃນສື່ອອນລາຍນັ້ນ ບໍ່ຄ່ອຍຄຶບຕາມປັດໃຈການຂຽນຂ່າວຄືໃນບົດຮຽນການຂຽນຂ່າວ ເພາະວ່າບໍ່ມີຜູ້ກວດແກ້-ບັນນາທິການ; ໃຜຂຽນກໍໂພສ໌ຂຶ້ນໂລດ ສະນັ້ນ, ມັນຈຶ່ງອ່ອນໄຫວ ແລະ ສ່ຽງຕໍ່ການລະເມີດກົດໝາຍທີ່ກ່ຽວຂ້ອງ ແຕ່ກໍ່ຕ້ອງຍອມຮັບວ່າມັນວ່ອງໄວທັນການ ເຊິ່ງສື່ດັ້ງເດີມ Oldmedia ບໍ່ສາມາດເຮັດໄດ້.

# ການຂຽນຂ່າວອອນລາຍ ( ຕໍ່ )

**2. ການເກັບກຳຂໍ້ມູນກ່ອນຂຽນຕອບໂຕ້.**

ການຂຽນຕອບໂຕ້ຈະເນັ້ນ ການອະທິບາຍ ບັນຫາທີ່ເກີດຂຶ້ນ ເປັນສ່ວນໃຫຍ່ ສະນັ້ນ, ນັກຂ່າວຕ້ອງກຳໄດ້ແນວທາງຂອງພັກ-ລັດ ຢ່າງແມ່ນຢຳລວມທັງກົດໝາຍທີ່ກ່ຽວຂ້ອງໃນນັ້ນຕ້ອງຖືກົດໝາຍວ່າດ້ວຍສື່ມວນຊົນເປັນຄູ່ມືປະຈຳຕົວ.

❖ **ການເກັບຂໍ້ມູນທີ່ຄວນເອົາໃຈໃສ່ມີ ດັ່ງນີ້:**

❑ **ໜຶ່ງ:** ສຶກສາບັນຫາທີ່ເກີດຂຶ້ນຢ່າງລະອຽດໂດຍເບິ່ງຂໍ້ມູນຈາກຫຼາຍແຫຼ່ງຂ່າວທັງພາຍໃນ ແລະ ຕ່າງປະເທດ;

❑ **ສອງ:** ຕ້ອງຮັບຮູ້ວ່າຂໍ້ມູນຈາກສື່ອອນລາຍເປັນຂໍ້ມູນທີ່ບໍ່ຊັດເຈນ ມີຂໍ້ມູນທີ່ອຸປະໂຫຼກ, ສ້າງຂ່າວປອມ;

# ການຂຽນຂ່າວອອນລາຍ ( ຕໍ່ )

- **ສາມ:** ຊອກຫາຂໍ້ມູນຈາກແຫຼ່ງຂ່າວທີ່ກ່ຽວຂ້ອງກັບບັນຫາທີ່ເກີດຂຶ້ນ ເພື່ອນຳມາອະທິບາຍ ຈຸດນີ້ຫຍຸ້ງຍາກແຕ່ກໍ່ຕ້ອງໄດ້ພະຍາຍາມຊອກຫາ;
- **ສີ່:** ຄົ້ນຄວ້າແນວທາງຂອງພັກ-ລັດ ກໍ່ຄືກົດໝາຍທີ່ກ່ຽວຂ້ອງກັບບັນຫາ ເພື່ອນຳມາເປັນບ່ອນອີງໃນການຕອບໂຕ້ອະທິບາຍ;
- **ຫ້າ:** ສຶກສາຄຳໂຕ່ງໂຕຍ ສຸພາສິດບູຮານ; ຄຳເວົ້າຂອງທ່ານຜູ້ນຳເພື່ອນຳມາໝູນໃຊ້ເຂົ້າໃນ ຂ່າວ ເພື່ອໃຫ້ມີສີສັນໂດຍສະເພາະການເຍາະເຍີ້ຍສຽດສີ.

# 3. ໂຄງສ້າງຂຽນຂ່າວຕອບໂຕ້ໃນສື່ອອນລາຍ.

- ຄືຂຽນຂ່າວທົ່ວໄປ: ຫົວຂໍ້; ເປີດຫົວເລື່ອງ; ເດີນເລື່ອງ ແລະ ສະຫຼຸບ ການພາດຫົວຂໍ້ຕ້ອງເຈາະລົງໄດ້ບັນຫາທີ່ສື່ອອນລາຍຕັ້ງຂຶ້ນ;
- ຈຸດສຳຄັນແມ່ນການເດີນເລື່ອງ ຕ້ອງອະທິບາຍບັນຫາທີ່ສື່ອອນລາຍຕັ້ງຂຶ້ນ ໂດຍມີຫຼັກຖານອ້າງອີງທີ່ເປັນຈິງ ( ບຸກຄົນໃນຂ່າວ );
- ພາກສະຫຼຸບ ຕ້ອງອະທິບາຍບັນຫາໃຫ້ຊັດເຈນ, ແຈ່ມແຈ້ງບໍ່ຊັ້ນຈະຖືກ ຕາມຄຳພັງເພີຍຂອງລາວທີ່ວ່າ: "ເຮືອຫຼົ້ມບາດຈອດ"

## ຕົວຢ່າງ: ຂ່າວຕອບໂຕ້ໃນສື່ອອນລາຍ
# ວົງການແພດລາວກ້າວສູ່ລະດັບໂລກ

ຕອນເຊົ້າວັນທີ 10 ມິຖຸນາ 2020 ຄະນະສະເພາະກິດໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນທີ່ສູນ ຄວບຄຸມໂຄວິດ-19 ກະຊວງສາທາລະນະສຸກວ່າ: ເປັນເວລາ 59 ມື້ແລ້ວບໍ່ມີຜູ້ຕິດເຊື້ອໃໝ່; ຜູ້ຕິດ ເຊື້ອສະສົມ 19 ຄົນ ແລະ ປິ່ນປົວຫາຍດີທັງໝົດ 19 ຄົນແລ້ວ.

ມື້ວານນີ້ ( ວັນທີ 9 ມິຖຸນາ 2020 ) ຜູ້ຕິດເຊື້ອໂຄວິດ-19 ຜູ້ສຸດທ້າຍ ( ກໍລະນີທີ 8 ) ໄດ້ ອອກໂຮງໝໍ ກັບຄືນສູ່ອ້ອມກອດຄອບຄົວຢ່າງມີໄຊ ເຖິງແມ່ນວ່າຕ້ອງກັກຕົວ 14 ວັນເພື່ອ ຕິດຕາມອາການ ແລ້ວກັບມາກວດຄືນກໍ່ຕາມ ແຕ່ກໍ່ຖືວ່າວົງການແພດລາວໄດ້ເຮັດສໍາເລັດພາລະກິດປາບໂຄວິດ-19 ໄດ້ໂດຍພື້ນຖານ ເຊິ່ງ ພວກເພິ່ນຕ້ອງໃຊ້ເວລາປະຈໍາການທັງໝົດ 180 ວັນ.

ຂ່າວນີ້ສ້າງຄວາມດີໃຈໄປທົ່ວສັງຄົມລາວພວກເຮົາ ແລະ ເປັນການຢືນຢັນວ່າ: ວົງການແພດລາວພວກເຮົາກໍ່ບໍ່ໜ້ອຍໜ້າປະເທດໃດໃນໂລກ ເຖິງແມ່ນວ່າຈະໃຊ້ເວລາປີ່ນປົວດົນກໍ່ຕາມ ສຳຄັນກ່ວາເພິ່ນກໍ່ແມ່ນບໍ່ມີຜູ້ເສຍຊີວິດ; ວົງການ ແພດລາວກ້າວສູ່ລະດັບໂລກແລ້ວ. ໃນຍາມເບີກບານມ່ວນຊື່ນເຊັ່ນນີ້; ມີເພື່ອນຜູ້ອ່ານອອນລາຍສົ່ງຂ່າວມາວ່າ: ຢາກໃຫ້ໂຄສົກປາກໝາໃນລາຍການຊ່ອງ ONE 31 ຂອງປະເທດໄທ ເບິ່ງວົງການແພດລາວຄືນໃໝ່; ລະຖິ້ມນິໄສອວດອີງທະນົງຕົວ ກ່າວຫາປະຈານປະເທດອື່ນ... ຝາກເຖິງບໍລິສັດແກຣມມີ ຂອງປະເທດໄທ ທີ່ຈ້າງທ້າວນີ້ມາອ່ານຂ່າວ ວ່າຄວນໃຫ້ຜູ້ກ່ຽວອອກສາ... ເພາະໃນຕໍ່ໜ້ານີ້ ຈະມີຂ່າວການຮ່ວມມື ລາວ-ໄທ ຫຼາຍຂຶ້ນ ຍ້ອນວ່າປີນີ້ເປັນປີສຳຄັນຂອງສາຍ ພົວພັນການທູດລາວ-ໄທ ຄົບຮອບ 70 ປີ; ຄົນຜູ້ດຽວຈະເປັນປາເນົ່າຄັບຂ້ອງ ທຳລາຍສາຍພົວພັນທີ່ງົດງາມຂອງສອງ ຊາດ ລາວ-ໄທ ກໍ່ຄືປະຊາຊົນລາວ-ໄທ.

ບໍ່ທີ່ນັ້ນ ສະມາຄົມກ່ຽວຂ້ອງທາງດ້ານສື່ ມວນຊົນໄທ ກໍຄວນກວດເບິ່ງຈັນຍາບັນ-ຄຸນສົມບັດຂອງຜູ້ກ່ຽວ ແລ້ວໄລ່ອອກຈາກວົງການສື່ມວນຊົນສານໍ? ບໍ່ຊັ້ນເສຍບົດບາດສະມາຄົມ. ຊົມເຊີຍ ວົງການແພດລາວ ເຖິງຈະປາບ Covid-19 ໄປແລ້ວ ແຕ່ກໍ່ຈິ່ງສືບຕໍ່ການເຝົ້າລະວັງຕໍ່ໄປ. ( ຂ່າວມີເດຍລາວ ).

ຈົບການນຳສະເໜີ
ຂໍຂອບໃຈ

